ກະຊວງຖະແຫຼງຂ່າວ... 
ເລກທີ 1583 ...
ວັນທີ 08 AUG 2014
ເວລາ 14.09
ຜູ້ຮັບ...

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------------------

ລັດຖະບານ ເລກທີ: 267/ລບ

ນະຄອນຫຼວງວຽງຈັນ, ວັນທີ 5.8.2014

# ດຳລັດ

## ວ່າດ້ວຍກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍຢາເສບຕິດ ສະບັບເລກທີ 10/ສພຊ, ລົງວັນທີ 25 ທັນວາ 2007;
- ອີງຕາມໜັງສືສະເໜີຂອງປະທານຄະນະກຳມະການແຫ່ງຊາດ ເພື່ອກວດກາ ແລະ ຄວບຄຸມ ຢາເສບຕິດ ສະບັບເລກທີ 338/ກຄສ, ລົງວັນທີ 12 ມິຖຸນາ 2014.

## ລັດຖະບານ ອອກດຳລັດ:

## ໝວດທີ 1
ບົດບັນຍັດທົ່ວໄປ

### ມາດຕາ1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການກ່ຽວກັບການສ້າງຕັ້ງ, ການຄຸ້ມຄອງ ບໍລິຫານ, ການນຳໃຊ້ ແລະ ການກວດກາການເຄື່ອນໄຫວ ຂອງກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ເພື່ອລະດົມຂົນຂວາຍທຶນຈາກທຸກພາກສ່ວນ ໃນສັງຄົມ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າມາຮັບໃຊ້ວຽກງານກວດກາ ແລະ ຄວບຄຸມຢາເສບຕິດ ລວມທັງການປິ່ນປົວ, ຟື້ນຟູສຸຂະພາບ ແລະ ຝຶກວິຊາຊີບເບື້ອງຕົ້ນ ໃຫ້ແກ່ຜູ້ຕິດຢາເສບຕິດ ແນ່ໃສ່ເຮັດໃຫ້ສັງຄົມລາວ ປອດຈາກຢາເສບຕິດ, ປະຊາຊົນລາວ ບັນດາເຜົ່າ ມີສຸຂະພາບ ແຂງແຮງ, ປະກອບສ່ວນເປັນ ກຳລັງແຮງເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາ ປະເທດຊາດ.

### ມາດຕາ2 ກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ

ກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ແມ່ນການຈັດຕັ້ງໜຶ່ງ ທີ່ລັດຖະບານແຫ່ງ ສປປ ລາວ ສ້າງຕັ້ງຂຶ້ນ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຢາເສບຕິດ, ມີພາລະບົດບາດໃນການລະດົມຂົນຂວາຍທຶນ ແລະ ຄຸ້ມຄອງລາຍຮັບ-ລາຍຈ່າຍ ຂອງກອງທຶນ ໃຫ້ມີຄວາມໂປ່ງໃສ ແລະ ມີປະສິດທິຜົນສູງ.

ກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ຂັ້ນສູນກາງ ຊຽນຫຍໍ້ "ທຄສ" ຖືກສ້າງຕັ້ງຂຶ້ນຢູ່ພາຍໃຕ້ການຄຸ້ມຄອງຂອງ ຄະນະກຳມະການແຫ່ງຊາດ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດ, ສ່ວນຢູ່ທ້ອງຖິ່ນ ໃຫ້ສ້າງຕັ້ງກອງທຶນຄວບຄຸມ, ຕ້ານ ແລະ ສະກັດກັ້ນ ຢາເສບ ຕິດ ແຂວງ, ນະຄອນ ຊຽນຫຍໍ້ "ທຄສຂ" ຢູ່ພາຍໃຕ້ການຄຸ້ມຄອງຂອງ ຄະນະກຳມະການກວດກາ ແລະ ຄວບຄຸມຢາເສບຕິດ ແຂວງ, ນະຄອນ ແລະ
ເຄື່ອນໄຫວຕາມດຳລັດສະບັບນີ້ ແລະ ລະບຽບກົດໝາຍ ຂອງ ສປປ ລາວ.

### ມາດຕາ3 ຫຼັກການບໍລິຫານຂອງກອງທຶນ

ການບໍລິຫານກອງທຶນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

- ຮັບປະກັນ ການຕິດຕາມ, ກວດກາ, ສະຫຼຸບ, ຕີລາຄາ ແລະ ລາຍງານຢ່າງເປັນປົກກະຕິ ຕາມສົກປີງົບປະມານ;
- ຮັບປະກັນຄວາມໂປ່ງໃສໃນການບໍລິຫານ ແລະ ການນຳໃຊ້ກອງທຶນໃຫ້ບັນລຸເປົ້າໝາຍ ແລະ ມີປະສິດທິຜົນສູງ.

### ມາດຕາ4 ຂອບເຂດການນຳໃຊ້ດຳລັດ

ດຳລັດສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ພົວພັນ ກັບວຽກງານກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ແຫຼ່ງລາຍຮັບ ແລະ ການນຳໃຊ້ກອງທຶນ

### ມາດຕາ5 ແຫຼ່ງລາຍຮັບ

ແຫຼ່ງລາຍຮັບກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ໄດ້ມາຈາກ:

1. ງົບປະມານຂອງລັດ ລວມທັງສ່ວນແບ່ງຕາມລະບຽບກົດໝາຍ ກ່ຽວກັບງົບປະມານຂອງລັດ ຈາກລາຍຮັບທີ່ໄດ້ ຈາກການດຳເນີນຄະດີ ກ່ຽວກັບຢາເສບຕິດເປັນຕົ້ນ ການຂາຍຊັບສິນ, ພາຫະນະ, ອຸປະກອນ ແລະ ຄ່າປັບໃໝ ທີ່ສານປະຊາຊົນໄດ້ຕັດສິນ ຫຼື ພິພາກສາແລ້ວ;

2. ການຂາຍຜະລິດຕະພັນຂອງສູນປິ່ນປົວ, ຟື້ນຟູສຸຂະພາບ ແລະ ຝຶກວິຊາຊີບໃຫ້ຜູ້ຕິດຢາເສບຕິດ;

3. ການຊ່ວຍເຫຼືອຈາກຕ່າງປະເທດ, ອົງການຈັດຕັ້ງສາກົນ ແລະ ອົງການບໍ່ສັງກັດລັດຖະບານ;

4. ການບໍລິຈາກ ຫຼື ການປະກອບສ່ວນຂອງບຸກຄົນ ແລະ ການຈັດຕັ້ງຢູ່ພາຍໃນ ແລະ ຕ່າງປະເທດ;

5. ການເຄື່ອນໄຫວກິດຈະກໍາຫາລາຍໄດ້ໃດໜຶ່ງເຊັ່ນ ການແຂ່ງຂັນກິລາ-ກາຍະກໍາ, ການ ສະແດງສິນລະປະວັນນະຄະດີ;

6. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

### ມາດຕາ6 ການແບ່ງປັນລາຍຮັບທີ່ໄດ້ຈາກການດໍາເນີນຄະດີກ່ຽວກັບຢາເສບຕິດ

ການແບ່ງປັນລາຍຮັບທີ່ໄດ້ຈາກການດໍາເນີນຄະດີ ກ່ຽວກັບຢາເສບຕິດ ໃຫ້ປະຕິບັດດັ່ງນີ້:

1. ລາຍຮັບ ທີ່ໄດ້ຈາກການດໍາເນີນຄະດີ ກ່ຽວກັບຢາເສບຕິດ ທີ່ກົມຕໍາຫຼວດ ສະກັດກັ້ນ ແລະ ຕ້ານຢາເສບຕິດ, ກະຊວງປ້ອງກັນຄວາມສະຫງົບ ແລະ ອົງການສືບສວນ-ສອບສວນຂັ້ນສູນກາງ ຄຸ້ມຄອງ ແລະ ແບ່ງປັນ:

- ສາມສິບສ່ວນຮ້ອຍ ມອບເຂົ້າງົບປະມານຂອງສູນກາງ;
- ເຈັດສິບສ່ວນຮ້ອຍ ມອບເຂົ້າກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ຂັ້ນສູນ ກາງ.

### ມາດຕາ7 ການນໍາໃຊ້ກອງທຶນ

ກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ໃຫ້ນໍາໃຊ້ເຂົ້າໃນວຽກງານຕ່າງໆ ດັ່ງນີ້:

1. ການໂຄສະນາເຜີຍແຜ່ລະບຽບກົດໝາຍ, ມະຕິຄໍາສັ່ງ ແລະ ບັນດານິຕິກໍາ, ລວມທັງສົນທິສັນຍາ, ສັນຍາ ແລະ ບົດບັນທຶກກັບສາກົນ ກ່ຽວກັບຢາເສບຕິດ ທີ່ ສປປ ລາວ ເປັນພາຄີ;
2. ການສຶກສາອົບຮົມ ເພື່ອສ້າງຈິດສໍານຶກໃຫ້ທົ່ວສັງຄົມຮັບຮູ້ ແລະ ເຂົ້າໃຈ ເຖິງພິດໄພ, ຜົນຮ້າຍ ຂອງຢາເສບຕິດ;
3. ການປິ່ນປົວ, ຟື້ນຟູສຸຂະພາບ ແລະ ຝຶກວິຊາຊີບເບື້ອງຕົ້ນ ໃຫ້ແກ່ຜູ້ຕິດຢາເສບຕິດ;
4. ການຄົ້ນຄວ້າວິໄຈ ກ່ຽວກັບຢາເສບຕິດ;
5. ການປະຕິບັດນະໂຍບາຍຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ແລະ ຕໍ່ຜູ້ໄດ້ຮັບເຄາະຮ້າຍ ຈາກການປະຕິບັດໜ້າທີ່ສະກັດກັ້ນ ແລະ ຕ້ານຢາເສບຕິດ;
6. ການສົ່ງເສີມ, ຊຸກຍູ້ ໃຫ້ປະຊາຊົນຫັນໄປປະກອບອາຊີບອື່ນ. ແທນການປູກພືດ ທີ່ມີສານເສບຕິດ;